ກະວີນິພົນ

# ນົກກະຈອກ !
# ແຕ່ມັນ ບ່ກະຈອກ

ລູກດອນກະເດັນ



ມອບໃຫ້ຫ້ອງສະໝຸດມະຫາສິລາ

ລູກດອນມາະເດັ່ນ

ກະວີນິພົນ

# ນົກກະຈອກ !
# ແຕ່ຜົນ ບໍ່ກະຈອກ

ລູກດອນກະເດັ່ນ

ອຸປະຖຳການພິມໂດຍ :

ຄອບຄົວທ່ານ ສູນທອນ ພິມມະຈັກ

໒໐໑໔

# ຄະນະຈັດທຳ

ຊື່ປຶ້ມ : **ນົກກະຈອກ ແຕ່ບໍ່ກະຈອກ**

ຂຽນໂດຍ : ❶ **ລູກດອນກະເດັນ**

ບັນນາທິການ : ❶ **ສາມະເນນ ຄຳພຸດ ເທບພະນົມ**

ພິສູດອັກສອນ : ❶ **ພຣະ ຈັນທະວິສຸກ ລັດຕະນາ**

❷ **ສາມະເນນ ຄຳສີ ວິລະພົນ**

ອອກແບບ-ຈັດໜ້າ : ❶ **ທອງເດືອນ ທຳມະວົງ**

ຕີພິມ : ❶ **ບຸນສົ່ງ ແກ້ວບົວສາຍ**

---


ພິມທີ່ : ໂຮງພິມປະຊາຊົນ

ຂະໜາດພິມ : 13 X 20 ຊມ

ຈຳນວນໜ້າ : 170

ພິມຄັ້ງທີ : I

ຈຳນວນພິມ : 2,000 ຫົວ

ທະບຽນພິມ : 135 ພຈ 10022014

ISBN : 978-9932-00137-8

# ສາລະບານ


| | | |
|---|---|---|
| | **ຄຳຜາລັບ, ຄຳນິຍົມ** | **໕** |
| 1. | ດອກຈານຍັງບານຄອຍ | **໑໖** |
| 2. | ຕ້າງລືມຫູ | **໒໕** |
| 3. | ຄຸນຄ່າຄົນ ແລະ ຄຸນຄ່າງານ | **໒໘** |
| 4. | ຂັບ ລຳ ຄຳກະວີ ແລະສິລະປະ | **໓໒** |
| 5. | ເລີ່ມຈາກຄອບຄົວ | **໔໑** |
| 6. | ຄອຍນ້ອງດຳນາໂນນ | **໔໔** |
| 7. | ສັນຕິພາບໃນກຳມື | **໔໗** |
| 8. | ສຽງແຄນລາວ ສາວລົງຂ່ວງ | **໕໒** |
| 9. | ຍາມໜາວ ແລະ ຄືນເຫງົາ | **໕໔** |
| 10. | ດອກຈານບານ ສັນຍານເຫງົາ | **໕໖** |
| 11. | ຈຳປາບ້ານແມ່ | **໕໙** |
| 12. | ຟ້າຮ້ອງແຕ່ຝົນບໍ່ຕົກ | **໖໑** |
| 13. | ຟ້າສັ່ງນາ ປາລາໜອງ | **໖໔** |
| 14. | ແຮງໃຈຈາກປາຍນາ | **໖໗** |
| 15. | ຝົນ | **໖໙** |
| 16. | ຫອມກິ່ນເຂົ້າໃໝ່ | **໗໑** |
| 17. | ຫອມກິ່ນເຂົ້າເໝົ້າ | **໗໔** |
| 18. | ກະວີຊົມເດືອນ | **໗໖** |

| | | |
|---|---|---|
| 19. | ຄິດຮອດບ້ານເຮົາເດ | ໗໐ |
| 20. | ຕົ້ນໄມ້ | ໗໔ |
| 21. | ຍາມຄວາຍເຂົ້າແຫລ່ງ | ໗໘ |
| 22. | ຄອຍນ້ອງທີ່ທົ່ງນາເຮົາ | ໙໐ |
| 23. | ງອຍຖຽງຂຽນກະວີ | ໙໔ |
| 24. | ສຽງຟ້າຮ້ອງສົ່ງ | ໙໕ |
| 25. | ຊົມປ່າບ້ານຂ້ອຍ | ໙໖ |
| 26. | ພູເຂົາຄວາຍ ພູເຂົາງາມ | ໑໐໔ |
| 27. | ບ້ານນາອະລຸນໃໝ່ | ໑໐໕ |
| 28. | ຝົນຮວາຍດອກຈານ | ໑໐໗ |
| 29. | ຊົມທົ່ງ | ໑໑໑ |
| 30. | ພູມພາບບ້ານນາ | ໑໑໕ |
| 31. | ດອກໄມ້ປ່າບານ | ໑໑໖ |
| 32. | ນານ້ອງບໍ່ເຄີຍເຫງົາ | ໑໔໐ |
| 33. | ນົກກະຈອກ ແຕ່ມັນບໍ່ກະຈອກ | ໑໔໓ |
| 34. | ປັດຊະຍາພຣາມ | ໑໔໘ |
| 35. | ມົນສະເໜເຊລຳເພົາ | ໑໔໙ |
| 36. | ຫອມກິ່ນແຜ່ນດິນເກີດ | ໑໓໓ |
| 37. | ຮຸ້ງ ແລະ ແຮ້ງ | ໑໕໐ |
| 38. | ເດືອນຫງາຍ ແລະ ທົ່ງນາ | ໑໕໓ |
| 39. | ເພັດກັບຄວາມດີ | ໑໕໘ |
| 40. | ວິລະກຳ "ອົງແກ້ວ" ລືບບໍ່ສູນ | ໑໕໙ |
| 41. | ແປນ | ໑໕໖ |
| 42. | ໄໝແທ້ແມ່ຕ່ຳ | ໑໘໐ |

# ຄຳຜາລຶບ

**ກະວີນິພົນຄືມຸງກຸດຂອງພາສາ** ອາລົມ ສຸນທະລີ ກັ່ນຕອງກະວີອອກຈາກມັນສະໝອງ ຖ່າຍທອດຄວາມຮູ້ສຶກທັງງົດງາມ ແລະ ຄວາມຫວັງ. ນັກຂຽນກະວີ ຄືນັກວິໄຈໄຈ້ແຍກຄັດສັນເອົາແຕ່ສິ່ງທີ່ດີງາມ ຕື່ມແຕ່ງໃຫ້ໂລກນີ້ໜ້າຢູ່ໂອບອ້ອມໄປດ້ວຍຄວາມຮັກ ຄວາມງາມ ປານິດ ບັນຈົງ ແລະສັນຕິພາບ ໂດຍຜ່ານພາສາກະວີທີ່ເຊື່ອງຊ້ອນ ປັດຊະຍາໃນເມັດກະວີ ທີ່ຈະປົ່ງດອກອອກໃບສົ່ງກິ່ນຫອມຫວນກ່ອມແຜ່ນປັດຖະພີອັນໜ້າຢູ່...

ຫລາຍປີເດີນຕາມຮອຍປາກກາປູ່ ອັກສອນສິນ ກິ່ນກະວີຊາວບ້ານ ຕຳນານພື້ນເມືອງ ເລື່ອງເລົ່າທົ່ວໄປ ແລ້ວຖ່າຍທອດເປັນບົດກະວີ ເພງ ແລະເລື່ອງສັ້ນ ນັບແຕ່ເປັນນັກຮຽນຢູ່ມັດທະຍົມຕອນຕົ້ນ ( ມ 2. 2002 ) ຫລາຍໆຄົນບອກວ່າ ນັກກະວີແຕ່ຕົນເອງກໍປະຕິເສດມາຕະຫລອດວ່າ ບໍ່ສົມດອກ ແຕ່ເປັນຜູ້ແອບຂຽນກະວີຕ່າງຫາກ ເພາະຫລາຍບົດຍັງເປັນຄຳເວົ້າທຳມະດາ ບໍ່ມີກິ່ນອາຍເປັນກະວີແມ່ນແຕ່ໜ້ອຍດຽວ ແຕ່ກໍປັບ-ປ່ຽນແບບຂຽນມາຕະຫລອດ ຊອກຫາເອກະລັກສະເພາະຕົນ ເພາະຕົນເອງບໍ່ແມ່ນປະຕິພານກະວີ ເວົ້າກອນແບບຫລ່ຽນໄຫລ ແຕ່ແຕ່ງດ້ວຍຫົວໃຈຮັກມັກໃນກະວີ ຢາກປູກດອກມາລີ ມາລາໃນສວນອາດອຸທິຍານ ອັກສອນໃຫ້ເບັ່ງບານ ສືບສານປາຍເຫລັກຈານປູ່ຍ່າ ຕາຍາຍ ນັກກະວີນິລະນາມປູທາງປະໄວ້.

ບົດກະວີກໍເປັນບົດແບບຊາວບ້ານຊົນນະບົດທົ່ວໄປ ເພາະພູມຫລັງເຄີຍເປັນຄົນຢູ່ຕາມດົງປ່າ ທ້ອງທົ່ງນາອັນກວ້າງໃຫຍ່ ງົມຂຽດ ຫາກະປູ ຕຶກແຫ ຢາມມອງ ຕາມພາສາຊາວບ້ານ ແຕ່ມັນກໍແມ່ນປະຫວັດສາດອັນໜຶ່ງຂອງຊີວິດຜູ້ຂຽນທີ່ເຄີຍພົບພໍ້ມາ. ນາມປາກກາ "**ລູກດອນກະເດັນ**" ບໍ່ກ້າຈະໄປວັດແທກປຽບທຽບນັກກະວີທ່ານອື່ນໄດ້ດອກ ຖ້າປຽບຕົນເອງແລ້ວ ຖ້າເປັນນັກມວຍກໍແມ່ນນັກມວຍນ້ອງໃໝ່ ຍຸດທະສາດ ກົນລະວິທີ ສາຍຕາ ລຳແຄ່ງລຳຂາ ກໍຍັງບໍ່ທັນໄດ້ແຂງ ໂດຍສະເພາະໝັດກໍຍັງບໍ່ທັນເຖິງຂັ້ນ ນັກມວຍຊື່ສຽງ ກ້ອງເວທີໂລກສ່ຳ "**ປາກຽວ**" ເທື່ອ, ຖ້າຈະປຽບນົກກໍແມ່ນນົກກະຈິບນ້ອຍໆ ປີກກ້າຂາແຂນ ກໍຍັງບໍ່ທັນໄດ້ແຂງແຮງຈະບິນສູງສ່ຳພະຍານົກອິນຊີໄດ້ເທື່ອດອກ ແຕ່ກໍບອກຕົນເອງສະເໝີວ່າເຖິງບໍ່ໄດ້ເປັນພະຍານົກອິນຊີ ແຕ່ກໍມີສິນໄຊໃນຫົວໃຈ ເພາະຈື່ຄຳເວົ້າຂອງ ປະທານ ໄກສອນ ພົມວິຫານ ເຄີຍກ່າວວ່າ "**ຊາວໜຸ່ມຈົ່ງເປັນດັ່ງນົກອິນຊີທີ່ບໍ່ຫວັ່ນໄຫວຕໍ່ພະຍຸລົມແດງ, ຈົ່ງເປັນສິນໄຊແຫ່ງຍຸກສະໄໝຂອງພວກເຮົາ**"

ກ່ອນຈະມາເຖິງເວທີກະວີກາບກອນແຫ່ງນີ້ ບອກວ່າເດີນທາງມາດົນນານ ບາງບ່ອນກໍສວຍງາມປານຊັ້ນຟ້າສະຫວັນ ທີ່ພະອິນເນົາສະຖິດບາງບ່ອນກໍເປັນບວກເປັນຂຸມ ເປື້ອນເປິເຕັມໄປດ້ວຍໜາມໜາກີດກັ້ນຂວາງທາງ ແສງແດດຮ້ອນຜົນ ຕົກລົມເໜັບໜາວ.... ແຕ່ກໍຕ້ອງເດີນ... ດັ່ງນັກການເມືອງຕາເວັນຕົກທ່ານໜຶ່ງກ່າວວ່າ "**ຂ້າພະເຈົ້າເປັນຄົນເດີນຊ້າ ແຕ່ຂ້າພະເຈົ້າບໍ່ເຄີຍເດີນຖອຍຫລັງ**" ຈັບປາກກາມາຂຽນກະວີກາບກອນ ເຖິງວ່າມັນບໍ່ລ້ຳລວຍ ເປັນເສດຖີ ມະຫາເສດຖີ ແຕ່ຄົນຂຽນກະວີກໍຄົງຈະຮູ້ດີ ມັນມີຄວາມສຸກຫາແນວປຽບປານບໍ່ໄດ້ ກະວີບາງບົດມ່ວນຊື່ນລື່ນເລີງ ກະວີ

ບາງບົດໂສກເຫງົາຄືໄກ່ຖືກຫ່າ ກະວີບາງບົດກໍໃຫ້ຄວາມຫວັງລຸກຂຶ້ນມາຕໍ່ສູ້ກັບຊີວິດ ກໍຄົນດຽວນັ້ນແຫລະຂຽນ.

ໃນພຣະພຸດທະສາສະໜາໂດຍສະເພາະຄຳພີພຣະໄຕປິດົກ ເຕັມໄປດ້ວຍຄາຖາ ທຳມະບົດ ກໍແມ່ນບົດກະວີນິພົນຫລາຍແບບຫລາຍລົດຊາດ ເປັນກຸສະໂລບາຍໃນການສອນທຳໃນສ່ວນປຸຖຸຊົນ...

**ຜູ້ຂຽນ ຂຽນກະວີນິພົນບໍ່ແມ່ນມີເປົ້າໝາຍຢູ່ທີ່ຄ່າບົດ ຄ່ານຶ່ງເຖິງລາງວັນ ເພາະນັກກະວີຈິ່ງໃຈສ້າງບົດກະວີຂຶ້ນມາ ຂຽນໃນສິ່ງທີ່ຕົນຢາກຂຽນ ບໍ່ແມ່ນຂຽນຄົນອື່ນຢາກໃຫ້ຂຽນ.**

ໂຣມກະວີ "**ນົກກະຈອກ ແຕ່ມັນບໍ່ກະຈອກ**" ເປັນປຶ້ມເຫລັ້ມທຳອິດປະເພດກະວີ ຈະນຳພາທ່ານສຳຜັດອາຍກິ່ນກະວີຊາວບ້ານເລື່ອງໃກ້ໆຕົວ. ຜູ້ຂຽນຂໍຂອບໃຈນັກກະວີ **ດຣ.ທອງຄຳ ອ່ອນມະນີສອນ** ນັກກະວີຊີໄຣ ສິລະປິນແຫ່ງຊາດ, **ກຸຫລາບສະຫວັນ** ນັກກະວີຊີໄຣ ສິລະປິນດີເດັ່ນ ແລະ **ດາວວຽງ ບຸດນາໂຄ** ນັກແຕ່ງເພງ ນັກກະວີ ສິລະປິນດີເດັ່ນ ທີ່ຂຽນຄຳນິຍົມດ້ວຍຄວາມອຸດສະຫະສະຫລະເວລາມີຄ່ານະໂອກາດນີ້ ແລະ ອາຈານ ຊາຍຄຳ ຈຳປາອຸທຸມ ຊ່ວຍກວດແກ້ອ່ານຢ່າງລະອຽດ. ພິເສດຕ້ອງຂໍຂອບໃຈ ທ່ານສູນທອນ ພົມມະຈັກ ພ້ອມຄອບຄົວ ທີ່ໃຫ້ການອຸປະຖຳຈັດພິມ ຖ້າບໍ່ມີເພິ່ນ ປຶ້ມເຫຼັ້ມນີ້ຄົງບໍ່ສາມາດເກີດມາມີນຕາເຫິງໂລກແຫ່ງວັນນະກຳໄດ້.

ລູກດອນກະເດັນ

**໑໔ ກຸມພາ ໒໐໑໔**

# ຄຳນິຍົມ

**ດຣ. ທອງຄຳ ອ່ອນມະນີສອນ**

**ນັກກະວີຊີໄຣຄົນທຳອິດຂອງລາວ ປີ 1998**

ນັກຄິດ ນັກຂຽນ ທ່ານໜຶ່ງກ່າວໄວ້ວ່າ "**ທົ່ງນາອັນກວ້າງໃຫຍ່ຈະສົດຊື່ນ ຂຽວກະຈີ ກາຍເປັນພື້ນທີ່ ທີ່ສາມາດໃຫ້ອາຫານ ປູກປັ້ນ ແລະປ້ອນຊີວິດມະນຸດໃຫ້ມີສຸຂະພາບເຂັ້ມແຂງໄດ້ນັ້ນຕ້ອງມາດຳໃສ່ຢ່າງຖືກຕ້ອງຕາມເຕັກນິກວິທີເຮັດນາ ເຊິ່ງສືບທອດຕໍ່ເນື່ອງກັນມາຕັ້ງແຕ່ສະໄໝດຶກດຳບັນພຸ້ນ**" ເຊັ່ນດຽວກັບອານາຈັກສິລະປະວັນນະຄະດີ ເຊິ່ງເປັນຄັງສາງແຫ່ງສະຕິປັນຍາຂອງຊາດລາວເຮົາ ທີ່ອຸດົມຮັ່ງມີມາແຕ່ບູຮານນະການນັ້ນ ຍ່ອມອາໄສ ນັກປະພັນ ນັກກະວີ ຮຸ່ນສືບທອດຍັງມີໄຟຮັກອັກສອນສິນໃນຫົວໃຈ, ມີກຳລັງເຂັ້ມແຂງໜຸ່ມແໜ້ນ, ມີຄວາມດຸໝັ່ນຂະຫຍັນພຽນ, ມີຈິນຕະນາການ ແລະ ມີວິໄສທັດກ້າວໜ້າ ເບິ່ງກວ້າງແນມໄກ ມີຄວາມກະຕືລືລົ້ນ ມີສະຕິຕື່ນຕົວ ແລະສະດຸ້ງໃຈຕໍ່ສູນທະລິຍະພາບ ກໍຄືຄວາມງາມຂອງວັນນະຄະດີ ພ້ອມທັງຮັກ ແລະ ມັກການປະພັນຢ່າງເປັນຊີວິດຈິດໃຈ ເຊິ່ງປຽບເໝືອນໝໍ່ກ້າ ແລະເມັດພັນແຫ່ງສະຕິປັນຍາ

ແຫ່ງຄວາມສະຫລາດຫລັກແຫລມທີ່ປູກຫວ່ານລົງໃນທ້ອງທົ່ງສິລະປະ ວັນນະຄະດີ ທີ່ກວ້າງໃຫຍ່ໄພສານຢ່າງບໍ່ຫວັ່ນໄຫວ ຢ້ານພະຍຸລົມແດງ ໄພນ້ຳຖ້ວມ ແລະຄວາມແຫ້ງແລ້ງທີ່ຈະມາພາຍລຸນແຕ່ປະການໃດ.

ຂ້າພະເຈົ້າເຫັນວ່າ "**ລູກດອນກະເດັນ**" ເປັນນັກປະພັນ ນັກກະວີມີຈິດວິນຍານ ແລະ ມີຄວາມໃຝ່ຝັນອັນສົດໃສຍາວໄກ, ມີຄວາມຕັ້ງໃຈຈິງ ມີພອນສະຫວັນ ຫ້າວຫັນ ດຸໝັ່ນ ຂີດຂຽນບົດປະພັນ ບົດກະວີ ອອກຮັບໃຊ້ສັງຄົມນັບແຕ່ປີ 2002 ເປັນຕົ້ນມາ. ໂດຍມີຄວາມມຸ່ງຫວັງທີ່ຢາກຖ່າຍທອດສັດຈະທຳ ແລະ ສິ່ງທີ່ດີງາມຈາກສ່ວນເລິກຂອງຫົວໃຈໃຫ້ແກ່ຜູ້ອ່ານ ພ້ອມທັງປາຖະໜາອັນແຮງກ້າ ທີ່ຢາກສືບທອດມໍລະດົກທາງປັນຍາດ້ານກະວີນິພົນ ອັນເປັນເອກະລັກສະເພາະຕົວຂອງຊາດລາວ ຄົນລາວ ໃຫ້ສາມາດຍືນຍົງຄົງຕົວຢູ່ໄດ້ໃນໂລກແຫ່ງຍຸກໂລກາພິວັດຢ່າງມີຊີວິດຊີວາສືບຕໍ່ໄປ.

"**ລູກດອນກະເດັນ**" ເປັນມະນຸດປາກການ້ອງໃໝ່ໄຟແຮງກ້າສະແດງຄວາມຈິງ, ບັນຫາຈິງທີ່ພົວພັນກັບຊີວິດຂອງສັງຄົມ. ບົດກະວີຂອງເຂົາໃນປຶ້ມ "**ນົກກະຈອກ ແຕ່ມັນບໍ່ກະຈອກ**" ຈະເນັ້ນໜັກໄປທາງດ້ານຕຳນິສິ່ງຂ່າວ ປ່າວເຕືອນ ແລະສຶກສາເຍົາວະຊົນຄົນຮຸ່ນໃໝ່-ບ່າວສາວໄວຄະນອງໃຫ້ມີສະຕິຕື່ນຕົວ ລຸກຂຶ້ນມາພ້ອມກັບຫົວໃຈແຫ່ງຄວາມຮັກຊາດ ເພື່ອຕໍ່ສູ້ຕ້ານຢັນກັບທ່າອຽງ ທີ່ຈະພາໃຫ້ສູນເສຍວັດທະນະທຳອັນດີງາມ ທີ່ສະທ້ອນອອກທາງດ້ານວັດຖຸ ແລະຈິດໃຈ.

ໃນນີ້ນັກປະພັນ ນັກກະວີ "**ລູກດອນກະເດັນ**"ຍັງໄດ້ໃຊ້ທຳມະ ແລະ ຫລັກປັດຊະຍາ ສະທ້ອນສັດຈະທຳເພື່ອຊ່ວຍຕັກເຕືອນປຸກລະດົມ ແລະກະຕຸກຊຸກຍູ້ໃຫ້ທຸກຄົນສະດຸ້ງໃຈຕໍ່ໄພອັນຕະລາຍທີ່ຈະຢຽບຍ່າງເຂົ້າມາຄຸກຄາມຄອບຄອງຈິດໃຈກໍຄືວັດທະນະທຳຂອງຊາດລາວເຮົາ. ກະວີຍັງສະທ້ອນພາບຈາກສ່ວນເລິກຂອງຄວາມຂົມຂື່ນລະທົມໃຈ ໃນສະພາບຕົວຈິງທີ່ວ່າ ບ່າວສາວຊາວໜຸ່ມ, ໜີຈາກທ້ອງທົ່ງນາ ອູ່ເຂົ້າ ອູ່ປາປ່ອຍປະຖິ້ມກຳເນີດໃຫ້ຫວ່າງເປົ່າເຫງົາຫງອຍ. ກະວີເຂົາຍັງຮຽກເອີ້ນເຊີນຊວນອອນແອ່ວໃຫ້ຄົນລາວຍຸກໃໝ່ໄວໜຸ່ມຊຸມບ່າວສາວໄດ້ຄິດສຳນຶກໃນຄວາມຈິງ ແລະ ເຫດຜົນ ເພື່ອຟື້ນສະຕິຕື່ນຕົວຫັນໜ້າກັບຄືນບ້ານນາຕັດສິນໃຈສ້າງສາພັດທະນາ ທ້ອງຖິ່ນຊົນນະບົດບ່ອນຝັງສາຍແຮ່ ບ່ອນແຜ່ສາຍບືທີ່ອຸດົມສົມບູນ.

ເຂົາຫວງຮັກມົນສະເໜແຫ່ງຊົນນະບົດ, ຮັກສິ່ງແວດລ້ອມ ແລະຄວາມສວຍສົດງົດງາມຂອງທຳມະຊາດ, ຮັກຮີດຄອງປະເພນີ ແລະວັດທະນະທຳອັນດີງາມຂອງຊາດ ທີ່ຍັງບໍລິສຸດສົດໃສຢູ່, ຮັກນ້ຳໃຈອັນສະອາດສ່ອງໃສ ສັດຊື່ ເອື້ອເຟື້ອ ເພື່ອແຜ່ ເມດຕາປານີທີ່ເປັນເອກະລັກຂອງຄວາມເປັນຊາດລາວ ຄົນລາວກໍຄືຂອງຊາວຊົນນະບົດ.

ຂ້າພະເຈົ້າເຊື່ອໝັ້ນວ່າປຶ້ມກະວີ "**ນົກກະຈອກ ແຕ່ມັນບໍ່ກະຈອກ**"ເຫລັ້ມນີ້ຈະເປັນເພື່ອນຮ່ວມໃຈໃຫ້ແສງໄຟໄຕ້ແສງທຽນທີ່ໃສດວງໜຶ່ງປະກອບສ່ວນປະດັບປະດາອຸທິຍານວັນນະຄະດີ ໂດຍສະເພາະໃນຂອບວົງຂອງກະວີນິພົນຂອງຊາດລາວເຮົາ.

ຂ້າພະເຈົ້າ ຂໍອວຍພອນອັນປະເສີດໃຫ້ "**ລູກດອນກະເດັນ**" ຈົ່ງປະສົບຜົນສໍາເລັດອັນສະຫງ່າງາມ ໃນພາລະໜ້າທີ່ການປະດິດຄິດແຕ່ງ ພ້ອມທັງຊີວິດທີ່ສົດຊື່ນແຈ່ມໃສຜາສຸກ ແລະ ມີໂຊກໄຊໃນເວທີວັນນະຄະດີຕະຫລອດໄປ.

ວຽງຈັນ, ວັນທີ **໑໔** ມັງກອນ **໒໐໑໔**

**ດຣ.ທອງຄໍາ ອ່ອນມະນີສອນ**

- ສິລະປິນແຫ່ງຊາດ ສາຂາວັນນະກໍາ
- ອະດີດຫົວໜ້າກົມວັນນະຄະດີ ແລະ ວັດທະນະທໍາມະຫາຊົນ
- ອະດີດປະທານສະມາຄົມນັກປະພັນລາວ
- ນັກກະວີຊີໄຣປີ 1998 ຄົນທໍາອິດຂອງປະເທດລາວ
- ນັກກະວີລາງວັນ ວັນນະກໍາແມ່ນໍ້າຂອງ 2008
- ນັກຄົ້ນຄວ້າພາສາສາດ ແລະ ວັນນະຄະດີລາວ.

# ຄຳນິຍົມ

“**ລູກດອນກະເດັນ**” ນີ້ແມ່ນນາມປາກກາ ເຊິ່ງບົ່ງບອກເຖິງຖິ່ນຖານບ້ານເກີດເມືອງນອນຂອງນັກຂຽນໜຸ່ມຄົນນີ້ ເກີດຢູ່ບ້ານດອນກະເດັນ ເມືອງໂຂງ ດິນແດນພາກໃຕ້ ທີ່ອຸດົມສົມບູນຮັ່ງມີໄປດ້ວຍເກາະດອນຈົນມີສົມຍານາມວ່າ ສີພັນດອນ ເມືອງແຫ່ງນັກປາດຊາດແຫ່ງນັກກະວີກາບກອນຄຳຜະຫຍາແລະລຳສີພັນດອນລຳໂສມ. ເຂົາບອກວ່າ “ **ຄວາມຝັນຢາກເປັນນັກແຕ່ງເພງທີ່ສຸດໃນຊີວິດ ເພື່ອຕາມຮອຍປາກກາຄູ ເຂົາສາລະພາບວ່າ ໄລຍະນັ້ນເພງສາວດົງໂດກ ສາວສີເມືອງ ໂດ່ງດັງ ເຂົາຈຶ່ງເດີນຕາມຮອຍມາສຶກສາທີ່ນະຄອນຫລວງ ເປັນຈຸດສູນກາງຂອງການສຶກສາ ເພື່ອຈະໄດ້ພົບປະກັບນັກກະວີ ນັກແຕ່ງເພງ ນັກປະພັນເພື່ອຕາມຄວາມຝັນທີ່ເຂົາປາຖະໜາມາດົນ....ວັນນີ້ເຂົາໄດ້ພົບຄວາມຈິງ ແລະ ເຂົາກໍໄດ້ເປັນດັ່ງໃຈຕ້ອງການ**”

ແຕ່ຄວາມຝັນເຂົາເປັນຈິງແລ້ວ ເພາະເຂົາບໍ່ຖິ້ມຄວາມຝັນເຂົາພະຍາຍາມເດີນຕາມຖະໜົນສາຍນີ້ ເຖິງວ່າມັນບໍ່ລ້ຳລວຍ ແຕ່ເຂົາບອກວ່າມັນກໍມີຄວາມສຸກ ມີຄ່າຫລາຍກວ່າເງິນ ແລະ ຄຳ ຫາຄ່າປຽບທຽບບໍ່ໄດ້ ເຂົາໄດ້ຂຽນກະວີ ບົດເລື່ອງສັ້ນ ແຕ່ງເພງ ແລະບົດຄວາມວິຊາການທະຍອຍອອກໜ້າໜັງສືພິມ ແລະ ວາລະສານ

ຢ່າງບໍ່ຂາດໄລຍະ. **"ລູກດອນກະເດັນ"** ເດີນທາງສາຍວັນນະກຳ ມາໄດ້ຫລາຍປີ, ສ້າງພະລັງໃນການຂຽນດ້ວຍການອ່ານທີ່ດີ. ຈາກ ພອນສະແຫວງ ບວກກັບຄວາມຂະຫຍັນ ຈຶ່ງກໍ່ເກີດພອນສະຫວັນ. ເຂົາຍັງຢືນຢັນອອກຈາກປາກອີກວ່າ ຊີວິດຂອງເຂົາປະນິທານຕັ້ງ ໃຈ ຈະເຮັດໃນຊີວິດ ກ່ອນເຂົາຈະອຳລາຈາກໂລກນີ້ໄປມີຢູ່ 3 ຂໍ້ ຄື:

**1. ອາຊີບຫລັກອ່ານໜັງສື**

**2. ອາຊີບເສີມສອນໜັງສື**

**3. ອາຊີບສຳຮອງຂຽນໜັງສື**

ນາມປາກກາ **"ລູກດອນກະເດັນ"** ຈະເຫັນຕາມໜັງສືພິມ ຕ່າງໆເຊັ່ນ: ວຽງຈັນໃໝ່, ປະເທດລາວ, ວາລະສານ ວັນນະສິນ ແລະໜັງສືພິມອື່ນໆ.ຂະນະນີ້ນາມປາກກາ**"ລູກດອນກະເດັນ"**ໄດ້ ເປັນທີ່ຮູ້ຈັກກັນແຜ່ກວ້າງໃນວົງການວັນນະກຳ ໂດຍສະເພາະແຟນໆ ນັກອ່ານຕ່າງກໍໄດ້ຖາມເຖິງນັກກະວີໜຸ່ມນ້ອຍຄົນນີ້ເປັນກະວີນ້ອງ ໃໝ່ໄຟແຮງ ແຈ້ງເກີດໃນວົງການນັກປະພັນລາວ.

ການເດີນທາງພາໃຫ້ຄົນສະຫລາດ!.....

ຄວາມສະຫລາດຂອງຄົນຜູ້ໜຶ່ງຕ້ອງຖາມຈາກຄົນອ້ອມ ຂ້າງ ແລະສັງຄົມ!...

ຂຽນ-ຂຽນ-ຂຽນໄປເລື້ອຍໆ ແລ້ວປາຍປາກກາຈະຄົມ ເອງ...ຈົ່ງສ້າງຝັນ... ແຕ່ຢ່າລໍຝັນ!...

ດາວວຽງ ບຸດນາໂຄ

**ນັກປະພັນເພງ, ນັກກະວີ, ສິລະປິນດີເດັ່ນ ສາຂາວັນນະກຳ**

**໑໔** ມັງກອນ **໒໐໑໔**

# ຄຳນິຍົມ

ດ້ວຍຊີວິດ ແຮງຮັກ ແລະ ແຮງສັດທາ ທີ່ມີຕໍ່ປາຍປາກກາ ບວກກັບຄວາມມຸ່ງມາດປາຖະໜາອັນແຮງກ້າ, ສະຕິປັນຍາທີ່ຄົມແຫລມ ແລະ ສາຍຕາທີ່ແນມເຫັນແສງສະຫວ່າງແຫ່ງພະທຳຄຳສອນຂອງພະພຸດ ພະທຳ ພະສົງ... ຜ່ານຊີວິດຫົ່ມຜ້າເຫລືອງພັນສາຕໍ່ພັນສາ, ໃນເດີ່ນວັດ ໃຕ້ຮົ່ມໂພ ກ້ອງສາຍຄາໜ້າກຸຕິ, ສຽງທົ່ງໂປງ ສຽງຕີກອງເພນ ກອງແລງ ໄປພ້ອມກັບສຽງສູດມົນພາວັນນາ... ສິ່ງທັງຫລາຍທັງປວງ ທັງທາງໂລກ ແລະ ທາງທຳ ໄດ້ນຳມາຊຶ່ງພະລັງຫລໍ່ຫລອມຫົວໃຈ ແລະ ຈິດວິນຍານໃຫ້ແກ່ ພຣະ ໄພວັນ ມາລາວົງ ຫລື **"ລູກດອນກະເດັນ"** ນາມປາກກາທີ່ບົ່ງບອກເຖິງເອກະລັກທີ່ມາທີ່ໄປຂອງນັກຂຽນ **"ຊາຍຜ້າເຫລືອງ"** ຜູ້ເຕີບໂຕມາດ້ວຍກ້ອນເຂົ້າບາດ ແລະ ຢາດນ້ຳມົນ... ຝຶກຕົນ ຝົນວິຊາ ຈົນປາຍປາກກາແກ່ກ້າ ແລະ ແຫລມຄົມ.

ຜູ້ຂ້າ ມີຄວາມເຫລື້ອມໃສສັດທາຕໍ່ຄົມປາກກາ ພາສາ ແລະ ວາດກະວີ ຂອງຊາຍຜ້າເຫລືອງອົງນີ້ ມາຕັ້ງແຕ່ເພິ່ນເລີ່ມສາຍແວວເຂົ້າສູ່ວົງການຖະໜົນຄົນຂຽນໜັງສື. ນຶກແລ້ວບໍ່ຜິດ!... ວ່າມື້ໜຶ່ງ ດອກບົວດອກນີ້ ຈະໝົ້ນດິນຕົມ ມົ້ນໜ້ານ້ຳ ພຸ່ງພົ້ນ ເບັ່ງບານ

ພາຍໃຕ້ແສງສີທອງຂອງຮຸ່ງອະລຸນ! ຊຶ່ງໃນທີ່ສຸດດອກບົວແຫ່ງແສງທຳ ແສງທຽນດວງນີ້ ກໍອ້າກີບແຜ່ໄພສານ, ຜ່ານປາຍປາຍກາ ພາສາ ອາລົມສຸນທະລີ ແລະ ວາດກະວີ ທີ່ມີສຳນວນເປັນຕົວຂອງຕົນເອງ! ຜູ້ຂ້າ ຂໍຍໍມືອານຸໂມທະນາທານ ນຳຜົນງານປາຍປາກກາ ທີ່ເກີດຈາກສັດທາຄວາມມຸ່ງໝັ້ນອັນແຮງກ້າຂອງ ພຣະ ໄພວັນ ມາລາວົງ ທີ່ປະສົບຜົນສຳເລັດ, ສ້າງບົດບາດ ຊື່ສຽງກ້າວເຂົ້າສູ່ວົງການນັກຂຽນ, ເປັນແສງທຽນທີ່ສະຫວ່າງແຈ້ງເປັນແຮງບັນດານໃຈ, ກາຍເປັນປາກກາທີ່ຄົມແຫລມອີກດ້ານໜຶ່ງ ທີ່ຈະຊ່ອຍສ້າງສີສັນອັນໂດດເດັ່ນໃຫ້ກັບວັນນະກຳບ້ານເຮົາໄປຕາບນານເທົ່ານານ.

ຂໍສະແດງຄວາມຂອບໃຈ ພຣະ ໄພວັນ ມາລາວົງ ທີ່ໂມທະນາທານຊ່ອງຫວ່າງຂອງໜ້າປຶ້ມໃຫ້ຜູ້ຂ້າ **"ກຸຫລາບສະຫວັນ"** ໄດ້ຈ່ຳປາຍປາກການຳ... ສາທຸໆ... ຂໍໃຫ້ປຶ້ມກະວີ...ທີ່ບໍ່ກະຈອກເຫລັ້ມນີ້ ໄດ້ຊ່ອຍພິສູດໃຫ້ຜູ້ອ່ານທັງຫລາຍຮູ້ວ່າ ຜືນແຜ່ນດິນທີ່ສວຍງາມ, ອັນເປັນທີ່ຮັກ ແລະ ຫວງແຫນ, ເປັນແດນດິນຖິ່ນອະລິຍະທຳອັນລ້ຳເລີດແຫ່ງນີ້ຍັງມີຄົນອີກຫລາຍໆຄົນທີ່...ບໍ່ກະຈອກ! ຄືກັບນົກກະຈອກ ຕົວລະຄອນເອກຂອງ ກະວີຊຸດນີ້ !

ທີ່ສາລາກະວີ: ງົວ ແລະ ກວຽນ,

**໑ ກຸມພາ ໒໐໑໔**

**ກຸຫລາບສະຫວັນ**

- ນັກກະວີ ລາງວັນ "ຊີໄຣ" ປີ 2004
- ສິລະປິນດີເດັ່ນ ສາຂາ ວັນນະກຳ

# ດອກຈານຍັງບານຄອຍ

❀ ຄືນຫັນຂຶງຂ່ວງຄ້າຍ      ລະດູເດັ່ນເດືອນສາມ
ດອກຈານແດງດູງາມ      ທົ່ວທາມທົ່ງເອ້
ເປ່ເລ່ເຕາະຕຳຕ້ອງ      ເມີນມອງໝາຍມ່າຍ
ເກາະກ່າຍກວມກອດກ້ຽວ      ຫລຽວຫລັງຄືນຄິດໂຄ້ງ
ຄາວພຸ້ນຜ່ານມາ

❀ ອະດີດເດີມຜ່ານພົ້ນ      ກາຍເກົ່າການຫລັງ
ຍາມແລງລົງລວມກັນ      ບ່ອນໂພນໄພກວ້າງ
ເກັບດອກດວງມວນໄມ້      ໃນດົງດອຍດ່ານ
ມີຮຸ່ນຮາມໜຸ່ມນ້ອຍ      ຄອຍຕຸ້ມຕ່ອມພຽງ

❀ ສຽງຕີກອງລັ່ນຄ້ອງ    ນອງມັ່ນນິນັນ ມ່ວນເດ
ປານປຸນເປີງສະຫວັນ    ບ່າວສາວແຊວຊ້ອງ
ຍ່ອງໆ ເນືອງນອງກ້ອງ    ກອນກັນກາງໄລ່
ແສນສຸກໄມມ່ວນແມ້ງ    ແຝງຝັ້ນຝ່າຍຫລັງ ແທ້ນາ

❀ ຄ່ຳຄືນໂຮມຮ່ວມເຮົ້າ    ເຕັມຕໍ່ອະຣາມຫລວງ
ປະທີບດວງແດງສີ    ສ່ອງແສງໃສແຈ້ງ
ເອັ້ງຊູລີວອນໄຫວ້    ໃນໂຮງທຳແຖວທ່ອງ
ພ່ອງຊະລາແມ່ເຖົ້າ    ມາເຕົ້າຕໍ່ເຕີມ

❀ ຟັງເທດທຳທ່ຽງແທ້    ເຖົ້າແກ່ຊະລາການ
ພູມຜະຫຍາ-ປັນຍາລາວ    ຂ່າວຂານໄຂເວົ້າ
ລານຄຳເຂົາຂຽນຂໍ້    ຍໍແຍງຍົກຍິ່ນ
ສຽງໝ່ອມເທດແຈ່ມແຈ້ງ    ຖະແຫລງອ້າງອ່ານປະທຳ

❀ ວັນນະກຳຄ່າເຄົ້າ    ກະວີເກົ່າກອນຜະຫຍາ ປາງພຸ້ນ
"ກ່ຳກາດຳ"-"ຄຳສອນ"    "ພະເຫວດ"-"ສິນໄຊ"ເຄົ້າ
"ສຸລິວົງ"-"ບາລິງ"-"ແບ້"    "ອິນທິຍານ"-"ແຕງອ່ອນ"
ກອນ"ຈຳປາສີ່ຕົ້ນ"    "ສີທົນ"-"ທ້າວຮຸ່ງ-ເຈືອງ"

❀ ຫລາຍເລື່ອງໂລມເລົ່າອ້າງ ອົມອ່ານວັນນະກຳ
ທຸກຄ່ຳຍາມລົງແລງ ແຕ່ງທຽນທູນເກົ້າ
ບ້ານເຮົາເຮືອງຮອງແທ້ ແລວັດວາຈັ່ງແມ່ນຮຸ່ງ
ຫອມຮັກໂຮມຮ່ວມປ້ອງ ປຸນເຜີ້ງແຜ່ນດຽວ ສະອອນເດ

❀ ເຂດຄາມຄືນຄ່ຳຄ້ອຍ ຊາຍໜຸ່ມຊຸມສາວ
ເຂັນຫລາຊານເຊຍເຮືອນ ເດັ່ນເດືອນດາວແຈ້ງ
ບ່າວສາວເຝືອແຝງຝັ້ນ ລົມກັນກອຍກ່າວ
ພາສາສາວບ່າວບ້ານ ປະຊັນຕ້ອຍຕ່ອຍຜະຫຍາ

24 / VII
ຫ້າມຈຳໜ່າຍ

**ຄຳຜະຫຍາບູຮານ**

**ຊາຍເວົ້າວ່າ:**

❀ "ເພິ່ນວ່າບໍ່ເຫັນໜ້າ ເຫັນຫລັງຄາກະພໍຢູ່
ເຫັນແຕ່ສົ້ນພາດແຈ ເຫັນແຕ່ແພພາດຮົ້ວ
ຍິນສຽງຫົວຢູ່ບ້ານ ພໍປານໄດ້ນັ່ງນຳ ນາງເອີຍ"

**ຍິງຕອບ:**

❀ "ຢ່າມາຕິຖະແຫລງຫລົ້ນ ເອົາຄາລົມມາເປັນໃຫຍ່
ມົດຕາຍນຳນ້ຳອ້ອຍ ບູຮານເຖົ້າກ່າວມາ ອ້າຍເອີຍ"

❀ ສຽງແຄນລອຍລ່ອງລີ້ວ ປິວປ່ວນຊວນໃຈ ອອນຊອນເດ
ມີຫລາຍລາຍລາຍແຄນ ເປົ່າປຸນປອງນ້ອງ
ສອງບ່າວສາວຄຽງຂ້າງ ນຳນາງອີ້ວອ່ອນ
ສາວລົງຂ່ວງບ່ອນບ້ານ ຊາຍຊວ້ານຊ່ວຍຊູ

❀ ຈັ່ງແມ່ນ ບາບ່າວຮູ້ ຫາແຄນເປົ່າປະໂລມນາງ
ເປົ່າຈັງຫວະເດີນດົງ ສົ່ງສຽງພໍສະອື້ນ
ເດີກດື່ນເລີຍລາຍສ້ອຍ ສຸດສະແນນນຳນັ່ງ
ແມ່ຮ້າງກ່ອມລູກນ້ອຍ ສຽງແຄນຕ້ອຍຕື່ມຖະແຫລງ

❀ ໃຜນໍ ! ສັ່ງມາຊ່າງຊັກແຊ້ງ ຍາດແຍ່ງຄຸນຄົນ ໄປເດ
ເກີນບໍ່ວົນແລຫລຽວ ປ່ຽວແພນພອຍເກົ້
ບ່າວສາວຊວນຊິງເຊົ້າ ເມົາເມືອງຫລວງລືມທົ່ງ
ເຊີດຊົງເມືອງມິ່ງຟ້າ ຖິ້ມນາທາມທົ່ງເຊົ້າ
ເຫງົາແງ້ນຫງ່ວມຫງອຍ

❀ ຄືນຊະລາຈາຈົ່ມຈ້ອຍ ກະພອຍພ່າງຊົມຊານ
ຄວາມສຸກສັນເນີນນານ ແຕ່ບູຮານເຮົາສ້າງ
ດຽວນີ້ ຮອຍຮາມຮ້າງ ຫາງເຫີນຫາຍຖິ່ນ ໄປແລ້ວ
ປະປ່ອຍດິນດ່ານດ້າວ ເຂົາຄ້ອຍຄັ່ງຄອຍ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ